## ບົດຮຽນ 30 - ຂອງປະທານຝ່າຍວິນຍານ

ຄວາມຕື່ນເຕັ້ນ, ຄວາມສັບສົນ, ການໂຕ້ຖຽງ ແລະ ການແບ່ງແຍກໄດ້ເກີດຂຶ້ນໃນຊຸມປີທີ່ຜ່ານມາ ໃນຖ່າມກາງຄຣິສຕຽນກ່ຽວກັບຂອງປະທານຝ່າຍວິນຍານ. ຫຼາຍຄົນອ້າງວ່າ ມີຄວາມຕື່ນເຕັ້ນຫລາຍທີ່ໄດ້ຮັບຂອງປະທານໃນການປາກພາສາແປກໆ, ຫຼືການຮັກສາໂຣກ, ຫຼືການທຳນວາຍ, ຫຼືການອັດສະຈັນຕ່າງໆ. ອີກຄົນກໍ່ຊອກຫາຂອງປະທານ ແລະ ອະທິຖານຫວັງຂໍຂອງປະທານນັ້ນໆ, ແຕ່ກໍ່ຜິດຫວັງ. ສິ່ງສຳຄັນທີ່ສຸດຄື ພວກເຮົາຕ້ອງຮູ້ຢ່າງຈະແຈ້ງສິ່ງທີ່ພຣະຄຳຂອງພຣະເຈົ້າເວົ້າກ່ຽວກັບຂອງປະທານຝ່າຍວິນຍານ. [ບາງຄຣິສຕະຈັກກໍ່ຊອກສະແຫວງຫາຂອງປະທານເຫຼົ່ານີ້ເຊັ່ນ: ຂອງປະທານໃນການເຮັດການອັດສະຈັນ, ຂອງປະທານທີ່ມີໃຈເອື້ອເຟື້ອເພື່ອແຜ່, ຂອງປະທານໃນການສະແດງໝາຍສຳຄັນ ຫຼື ຂອງປະທານໃນການຮັບໃຊ້ພຣະເຈົ້າ.]
ບົດຮຽນນີ້ຈະເນັ້ນໃສ່ຂອງປະທານທີ່ລະບຸໄວ້ໃນ 1 ໂກຣິນໂທ 12. ມີຄື: ພຣະຄຳແຫ່ງປັນຍາ, ພຣະຄຳແຫ່ງຄວາມຮູ້, ຄວາມເຊື່ອ, ການຮັກສາໂຣກ, ການອັດສະຈັນ, ການທຳນວາຍ, ທາງວິນຍານ, ກາກປາກພາສາ ແລະ ການຕີຄວາມຫມາຍຂອງພາສາຕ່າງໆ.

## ຂອງປະທານເລື່ອງການສະແດງໝາຍສຳຄັນ

ບາງຄຣິສຕະຈັກສອນວ່າ ຂອງປະທານຝ່າຍວິນຍານມີຄວາມສຳຄັນຫຼາຍໃນການນະມັດສະການຂອງເຮົາ ແລະ ໃນການດຳລົງຊີວິດຝ່າຍວິນຍານ. ຢ່າງໃດກໍ່ຕາມ, ໃນພຣະຄຳພີຍັງບໍ່ມີພື້ນທີ່ພໍທີ່ຈະຂຽນເລື່ອງຂອງປະທານເຫຼົ່ານີ້ໄດ້. ມີພຣະທຳຕອນດຽວເທົ່ານັ້ນໃນມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນ ທີ່ເບິ່ງຄືວ່າ ກຳລັງເວົ້າເຖິງຂອງປະທານຝ່າຍວິນຍານໃນມາຣະໂກ 16:17-20. ແຕ່ພຣະທຳຕອນນີ້ໃນມາຣະໂກບໍ່ໄດ້ໃຊ້ຄຳວ່າ "ຂອງປະທານ." ແຕ່ໃຊ້, ຄຳວ່າ "ໝາຍສຳຄັນ" ແທນ (ດັ່ງນັ້ນ ຈຶ່ງເປັນການອ້າງເຖິງ "ຂອງປະທານໃນການສະແດງໝາຍສຳຄັນ"). "ໝາຍສຳຄັນ" ທີ່ໄດ້ກ່າວມາຄື: ການຂັບໄລ່ຜີມານຮ້າຍອອກ, ການເວົ້າພາສາແປກໆ, ການຈັບງູໂດຍບໍ່ໄດ້ຮັບອັນຕະລາຍໃດໆ, ການດື່ມຢາພິດໂດຍບໍ່ໄດ້ຮັບອັນຕະລາຍໃດ, ແລະຮັກສາຄົນປ່ວຍ. ມາຣະໂກບໍ່ໄດ້ອະທິບາຍ ຫຼື ລະບຸຄັກແນ່ກ່ຽວກັບ "ໝາຍສຳຄັນ" ເຫຼົ່ານີ້ ພຽງແຕ່ກ່າວເຖິງເທົ່ານັ້ນ.

ແນ່ນອນ ການສ້າງຄວາມເຂົ້າໃຈກັບຄຳວ່າ "ໝາຍສຳຄັນ" ທີ່ປະກົດໃນພຣະຄຳພີຈຶ່ງສິ່ງສຳຄັນ. ໝາຍສຳຄັນອັນທຳອິດທີ່ມະນຸດໄດ້ສະແດງໃນພຣະຄຳພີແມ່ນໝາຍສຳຄັນທີ່ໂມເຊໄດ້ເຮັດໃນທ່າມກາງຊົນຊາດອິດສະຣາເອນ (ອົບພະຍົບ 4:8-9). ໝາຍສຳຄັນຕ່າງໆ ແມ່ນສຳຄັນຕໍ່ອິດສະຣາເອນຕະຫຼອດໃນປະຫວັດສາດ. "ພຣະເຈົ້າຢາເວໄດ້ກ່າວແກ່ໂມເຊວ່າ, "ປະຊາຊົນເຫຼົ່ານີ້ຍັງຈະໝິ່ນປະໝາດເຮົາອີກດົນນານປານໃດ? ເຖິງແມ່ນວ່າ ເຮົາໄດ້ເຮັດການອັດສະຈັນຫລາຍຢ່າງໃນທ່າມກາງພວກເຂົາແລ້ວ ພວກເຂົາກໍ່ຍັງປະຕິເສດທີ່ຈະໄວ້ວາງໃຈໃນເຮົາຕະຫລອດໄປບໍ? (ຈົດເຊັນບັນຊີ 14:11). ອິດສະຣາເອນໄດ້ອອກຈາກປະເທດເອຢິບ "ໂດຍໝາຍສຳຄັນຕ່າງໆ" (ພຣະບັນຍັດສອງ 4:34; 6:22). 1 ໂກລິນໂທ 1:22 ກ່າວວ່າ, "ສຳລັບຊາວຢິວຕ້ອງເຫັນໝາຍສຳຄັນ." ພຣະເຈົ້າບໍ່ໄດ້ໃຫ້ໝາຍສຳຄັນແກ່ຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ. ໝາຍສຳຄັນຕ່າງໆທີ່ລະບຸໄວ້ໃນມາຣະໂກ 16:17-20 ແມ່ນໄດ້ຖືກມອບໃຫ້ກັບສາວົກ

ຊາວຍິວ. ຂອງປະທານເຫຼົ່ານີ້ຖືກມອບໃຫ້ເພື່ອຢືນຢັນຂ່າວປະເສີດທີ່ອິດສະຣາເອນຈະປະກາດສູ່ໂລກ. "ແລ້ວພວກສາວົກເຫຼົ່ານັ້ນ ກໍອອກໄປປະກາດຂ່າວປະເສີດທົ່ວທຸກທີ່ທຸກບ່ອນ ແລະອົງພຣະຜູ້ເປັນເຈົ້າກໍໄດ້ຮ່ວມງານກັບພວກເພິ່ນ ແລະພຣະອົງໄດ້ຢັ້ງຢືນໃຫ້ເຫັນວ່າ ການປະກາດຂ່າວປະເສີດຂອງພວກເພິ່ນ ເປັນຄວາມຈິງ ດ້ວຍໝາຍສຳຄັນ ແລະ ການອັດສະຈັນຕ່າງໆ ທີ່ເກີດຂຶ້ນນັ້ນ. ອາແມນ" (ມາລະໂກ 16:20). ຈາກຂໍ້ພຣະຄຳພີທີ່ພວກເຮົາໄດ້ສຶກສາໃນບົດທີ 19-25, ພວກເຮົາຮູ້ວ່າ ມາຣະໂກ 16:17-20 ບໍ່ແມ່ນພາລະກິດທີ່ພວກເຮົາໄດ້ຮັບມອບໝາຍ. ພາລະກິດດັ່ງກ່າວ (ທີ່ມາພ້ອມກັບຂອງປະທານໃນການສະແດງໝາຍສຳຄັນ) ໄດ້ຖືກມອບໝາຍໃຫ້ແກ່ອິດສະຣາເອນ. ພວກເຮົາຕ້ອງແບ່ງພຣະຄຳແຫ່ງຄວາມຈິງໃຫ້ຖືກຕ້ອງ (2 ຕີໂມທຽວ 2:15). ໝາຍສຳຄັນຕ່າງໆ ໄດ້ຊົງມອບໃຫ້ແກ່ອິດສະຣາເອນ, ບໍ່ແມ່ນຄຣິສຕະຈັກ, ພຣະກາຍຂອງພຣະຄຣິດ.

<u>"ພາສາແປກໆ" ແມ່ນຫຍັງ?</u>

ໃນບັນດາຂອງປະທານຝ່າຍວິນຍານ, ຂອງປະທານທີ່ເປັນທີ່ນິຍົມ ແລະ ມີຄວາມຂັດແຍ່ງກັນຫຼາຍທີ່ສຸດແມ່ນຂອງປະທານໃນການປາກພາສາແປກໆ. ສະນັ້ນ, ການເອົາໃຈໃສ່ສຶກສາເປັນພິເສດຕໍ່ຂອງປະທານຝ່າຍວິນຍານນີ້ ຈຶ່ງສຳຄັນຫຼາຍ. ເມື່ອສຶກສາກ່ຽວກັບຂອງປະທານ, ພວກເຮົາຕ້ອງອີງຕາມພຣະຄຳພີ ບໍ່ແມ່ນປະສົບການຂອງເຮົາ. ໃນຍຸກສຸດທ້າຍ. ໂປໂລເຕືອນໃນ 2 ຕີໂມທຽວ 4:3-4 ວ່າ ຄົນຈະບໍ່ຟັງຫລັກຄຳສອນອັນແທ້ຈິງ ແຕ່ຈະຫັນໄປສົນໃຈນິຍາຍເລື່ອງຕ່າງໆ (ເລື່ອງເລົ່າ, ຄຳພະຍານ, ປະສົບການ, ນະວະນິຍາຍ ແລະອື່ນໆ).

ຫຼາຍຄົນໃນຄຣິສຕະຈັກທີ່ເນັ້ນຂອງປະທານໃນການປາກພາສາແປກໆ ແລະ ເພັນເຕຄອສ ອ້າງວ່າ ພາສາແປກໆແມ່ນພາສາທີ່ພາໃຫ້ເກີດຄວາມສະຫງົບສຸກທາງຈິດໃຈ ຫຼື ພາສາຂອງທູດສະຫວັນ. ການທີ່ຄົນນັ້ນບໍ່ສາມາດເວົ້າ "ພາສາແປກໆ" ໄດ້ກໍຖືວ່າບໍ່ມີຄວາມໝາຍຫຍັງ (ເປັນການປາກເວົ້າທີ່ບໍ່ເຂົ້າໃຈໄດ້). ຄວນສັງເກດວ່າ ຊາວໂກລິນໂທຜູ້ທີ່ເຊື່ອສ່ວນໃຫຍ່ແມ່ນເຄີຍຂາບໄຫວ້ "ຮູບເຄົາລົບ" ກ່ອນທີ່ພວກເຂົາໄດ້ຮັບຄວາມລອດພົ້ນ (1 ໂກລິນໂທ 12:2). ມັນເປັນທີ່ຮູ້ກັນດີວ່າ ຄົນທີ່ບໍ່ເຊື່ອໃນເມືອງໂກລິນໂທ (ລວມທັງຄົນອື່ນໆໃນທຸກມື້ນີ້ ເຊັ່ນ: ຊາວຮິນດູ) ໂດຍທົ່ວໄປໃຊ້ຄຳເວົ້າທີ່ເຮົາຟັງບໍ່ເຂົ້າ - ຄຳທີ່ບໍ່ຟັງບໍ່ເຂົ້າໃຈຊຶ່ງເປີດເຜີຍໂດຍພຣະວິນຍານ. ພວກເຂົາເຊື່ອວ່າ ພວກເຂົາສາມາດສື່ສານກັບພຣະເຈົ້າໄດ້ຢ່າງມີປະສິດທິຜົນ ໂດຍການເວົ້າພຣະຄຳຂອງພຣະເຈົ້າ. [ພວກເຮົາຄວນສັງເກດໃນທີ່ນີ້ວ່າ ຕອນທີ່ພຣະເຢຊູຄຣິດສະຖິດຢູ່ໃນໂລກນີ້, ພຣະອົງບໍ່ໄດ້ເວົ້າພາສາທູດສະຫວັນທີ່ພິເສດຫຍັງ. ແມ່ນແຕ່ຕອນທີ່ເວົ້າກັບພຣະບິດາ, ພຣະຄຣິດກໍຊົງເວົ້າພາສາທີ່ໃຊ້ທົ່ວໄປໃນອິດສະຣາເອນໃນຕອນນັ້ນ.]

1 ໂກລິນໂທ 13:1 ກ່າວເຖິງ "ພາສາຂອງຄົນ ແລະ ຂອງເທວະດາ." ມີບາງຄົນທີ່ສອນວ່າ "ພາສາຂອງເທວະດາ" ຫມາຍເຖິງພາສາພິເສດຂອງທູດສະຫວັນ. ການສົນທະນາກັນໃນລາຍລະອຽດເລື່ອງພຣະທຳຂໍ້ນີ້ຍັງຄົງມີຄວາມຈຳກັດ. ພວກເຮົາພຽງແຕ່ຈະຊີ້ໃຫ້ເຫັນວ່າ ບັນດາທູດສະຫວັນໃນພຣະຄຳພີຕ່າງໆກໍເວົ້າພາສາທົ່ວໄປ ແລະ ມະນຸດທົ່ວໄປກໍສາມາດເຂົ້າໃຈໄດ້. ຄຳວ່າ "ພາສາແປກໆ" ໃນພຣະຄຳພີຫມາຍເຖິງພາສາທີ່ໃຊ້ເທິງໂລກນີ້ ເປັນພາສາທີ່ຮູ້ຈັກກັນ.

ວັດຖຸປະສົງຂອງຂອງປະທານໃນການປາກພາສາແປກໆແມ່ນຫຍັງ? "ໃນກົດບັນຍັດມັນຖືກຂຽນໄວ້ວ່າ, ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ ເຮົາຈະເວົ້າກັບພົນລະເມືອງນີ້ດ້ວຍພາສາຕ່າງດ້າວ, ດ້ວຍຮິມສົບປາກຂອງຄົນຕ່າງດ້າວ. ເຖິງປານນັ້ນ ພວກເຂົາກໍຈະບໍ່ຟັງເຮົາ" (1 ໂກຣິນໂທ 14:21).

ຂອງປະທານຝ່າຍວິນຍານ ບໍ່ໄດ້ມອບໃຫ້ ເພື່ອຄວາມບັນເທີງ ຫຼື ເພື່ອສ້າງຄວາມຕື່ນເຕັ້ນໃຫ້ກັບຜູ້ທີ່ຄອບຄອງມັນ (1 ໂກລິນໂທ 12:7). 1 ໂກລິນໂທ 14: 21 ແມ່ນສໍາຄັນຫຼາຍ, ແຕ່ມັກຖືກລະເລີຍ, ເປັນຂໍ້ພຣະຄໍາພີກ່ຽວກັບຂອງປະທານໃນການປາກພາສາແປກໆ. ການທີ່ໂປໂລອ້າງອີງເຖິງຂໍ້ຄວາມຈາກພຣະທໍາເອຊາຢາ ເມື່ອຂຽນກ່ຽວກັບຂອງປະທານໃນການປາກພາສາແປກໆແມ່ນເລື່ອງທີ່ແປກປະຫຼາດ. ຄຣິສຕຽນຫຼາຍຄົນຄິດວ່າ ການປາກພາສາແປກໆ ແມ່ນຂອງປະທານອັນໜຶ່ງໃນພຣະຄໍາພີໃຫມ່ທີ່ຊົງມອບໃຫ້ແກ່ຄຣິສຕະຈັກ. ແລ້ວເປັນຫຍັງ, ໂປໂລຈຶ່ງເວົ້າວ່າ ໄດ້ມີຂຽນບັນທຶກກ່ຽວກັບພາສາແປກໆ ໃນພຣະທໍາເອຊາຢາ 28:11-12? ເມື່ອກວດສອບຂໍ້ພຣະຄໍາພີທີ່ພົບຢູ່ໃນເອຊາຢາ 28 ສະແດງໃຫ້ເຫັນວ່າ ພຣະເຈົ້າກໍາລັງເຕືອນຊາວອິດສະຣາເອນເຖິງເວລາທີ່ພວກເຂົາຈະເວົ້າພາສາຂອງຄົນຕ່າງຊາດ. ອັນນີ້ຈະເປັນສັນຍາລັກເຖິງການພິພາກສາຂອງພຣະເຈົ້າຕໍ່ພວກເຂົາ. (ອີກເທື່ອຫນຶ່ງ, ຄວນຈະສັງເກດວ່າ "ພາສາແປກໆ" ແມ່ນພາສາທີ່ມະນຸດໃຊ້ຢູ່ເທິງໂລກນີ້. ໂດຍສະເພາະໃນທີ່ນີ້ແມ່ນພາສາອັດຊີເລຍ.)

ຫຼັງຈາກທີ່ອ້າງອີງເຖິງເອຊາຢາໃນ 1 ໂກລິນໂທ 14:21, ໂປໂລໄດ້ເລີ່ມຂໍ້ທີ 22 ດ້ວຍຄໍາວ່າ "ເພາະສະນັ້ນ." ເຫັນໄດ້ຢ່າງຈະແຈ້ງ, ການອ້າງອີງເຖິງພາສາແປກໆໃນພຣະທໍາເອຊາຢາແມ່ນມີຄວາມກ່ຽວພັນກັບການສອນຂອງໂປໂລເລື່ອງພາສາແປກໆ ໃນໂກຣິນໂທ. 1 ໂກລິນໂທ 14:22 ແມ່ນຄໍາເວົ້າໂດຍກົງກ່ຽວກັບຈຸດປະສົງຂອງຂອງປະທານໃນການປາກພາສາແປກໆ. "ສະນັ້ນ ການປາກພາສາແປກໆ ຈຶ່ງບໍ່ເປັນສັນຍາລັກສໍາຄັນແກ່ຄົນທີ່ເຊື່ອ, ແຕ່ສໍາຄັນແກ່ຄົນທີ່ບໍ່ເຊື່ອ, ສ່ວນການປະກາດພຣະທໍາ ບໍ່ສໍາຄັນສໍາລັບຄົນທີ່ບໍ່ເຊື່ອ, ແຕ່ສໍາຄັນສໍາລັບຄົນທີ່ເຊື່ອແລ້ວ." ພາສາແປກໆແມ່ນ "ສໍາລັບສັນຍາລັກສໍາຄັນ." ສັນຍາລັກສໍາຄັນຫມາຍເຖິງໃຜ? ຄໍາເວົ້າຈາກເອຊາຢາສະແດງໃຫ້ເຫັນວ່າ ພາສາແປກໆ ເປັນສັນຍາລັກສໍາຄັນຂອງຊາວອິດສະຣາເອນ. ໂປໂລໄດ້ແກ້ໄຂຄວາມຄິດທີ່ບໍ່ຖືກຕ້ອງຂອງຊາວໂກຣິນໂທ, ຊຶ່ງຄິດວ່າ ພາສາແປກໆແມ່ນໄດ້ມອບໃຫ້ກໍເພື່ອເປັນປະໂຫຍດແກ່ຜູ້ກ່ຽວເທົ່ານັ້ນ.

ສິ່ງທີ່ຄຣິສຕະຈັກຕ່າງໆ ອາດຈະກ່າວເຖິງກ່ຽວກັບຈຸດປະສົງຂອງ ຂອງປະທານໃນກາກປາກພາສາແປກໆ, ພຣະຄໍາພີບອກຢ່າງຈະແຈ້ງວ່າ. ພາສາແປກໆ "ແມ່ນສໍາລັບໝາຍສໍາຄັນ", ເຊັ່ນ: ມີຈຸດປະສົງເພື່ອເປັນໝາຍສໍາຄັນ. ນອກຈາກນັ້ນ, ພວກເຮົາຍັງໄດ້ເຫັນແລ້ວວ່າ ການປາກພາສາແປກໆ ບໍ່ແມ່ນໝາຍສໍາຄັນສໍາລັບຜູ້ທີ່ເຊື່ອ, "ແຕ່ໃຫ້ແກ່ຜູ້ທີ່ບໍ່ເຊື່ອ." ອີກເທື່ອໜຶ່ງ, ຂໍ້ທີ 22 ແມ່ນຄໍາເວົ້າຂອງເອຊາຢາໃນຂໍ້ທີ 21 ທີ່ເວົ້າເຖິງພາສາແປກໆ ທີ່ໃຊ້ເວົ້າກັບ "ປະຊາຊົນເຫຼົ່ານີ້." ຄໍາວ່າ "ປະຊາຊົນເຫຼົ່ານີ້" ໃນພຣະທໍາຕອນນີ້ແມ່ນບໍ່ສາມາດເປັນຜູ້ອື່ນໄດ້ ນອກຈາກປະຊາຊົນຊາວຍິວເທົ່ານັ້ນ. ໃນເວລາທີ່ພວກເຮົາເອົາຄວາມຈິງເຫຼົ່ານີ້ຈາກພຣະຄໍາພີມາປະກອບໃສ່ກັນ, ພວກເຮົາສາມາດສະຫຼຸບໄດ້ວ່າ ພາສາແປກໆ ແມ່ນໃຊ້ສໍາລັບເປັນໝາຍສໍາຄັນເຖິງການພິພາກສາຕໍ່ຊາວຍິວຜູ້ທີ່ບໍ່ເຊື່ອ. ມີຫຼາຍຕົວຢ່າງໃນພຣະຄໍາພີ ທີ່ສະຫນັບສະຫນູນບົດສະຫຼຸບນີ້. "ເບິ່ງແມ, ເຮົາຈະນໍາຊາດໜຶ່ງມາສູ່ເຈົ້າຈາກແດນໄກ, ໂອ້ເຊື້ອສາຍອິດສະຣາເອນ, ພຣະຜູ້ເປັນເຈົ້າໄດ້ກ່າວວ່າ: ມັນເປັນຊາດທີ່ຍິ່ງໃຫຍ່, ຊາດທີ່ເກົ່າແກ່, ຊາດທີ່ມີພາສາເຈົ້າບໍ່

ຮູ້, ທັງບໍ່ເຂົ້າໃຈສິ່ງທີ່ພວກເຂົາເວົ້າ" (ເຢເຣມີຢາ 5:15). ພາສາທີ່ເວົ້າໃນວັນເພນເຕຄໍສະເຕໃນກິດຈະການ 2, ກໍມີໜ້າທີ່ເປັນສັນຍາລັກເຕືອນໄພເຖິງອິດສະຣາເອນ. ການຕັກເຕືອນຂອງເປໂຕທີ່ຕໍ່ຊາວອິດສະຣາເອນກໍໄດ້ຮັບການຢືນຢັນໂດຍຄວາມສາມາດໃນການເວົ້າພາສາແປກໆຄືກັນ. (ເບິ່ງກິດຈະການ 2:34–36). ຊາວຢິວທີ່ບໍ່ເຊື່ອຮູ້ວ່າ ຄວາມສາມາດໃນການເວົ້າພາສາແປກໆແມ່ນໝາຍສຳຄັນການອັດສະຈັນຈາກພຣະເຈົ້າ. ຄຳເວົ້າທີ່ໄຮ້ ຄວາມຫມາຍຈະມີຜົນກະທົບຫຍັງຫຼາຍປານນັ້ນ. ໂດຍທົ່ວໄປແລ້ວ ຄົນທີ່ຂາບໄຫວ້ຮູບເຄົາລົບ, ຄົນບ້າ ແລະ ຄົນເມົາເຫຼົ້າ ກໍເວົ້າໃນລັກສະນະດັ່ງກ່າວ. ອັນນີ້ຄົງຈະບໍ່ອາດດຶງດູດໃຈຊາວຢິວໃຫ້ເຊື່ອວ່າ ເປັນສັນຍາລັກສຳຄັນຈາກພຣະເຈົ້າໄດ້.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/44/44_Ac_02_03_RG.jpg -
ໃຊ້ເພື່ອເປັນຕົວຢ່າງ ການເຕືອນໄພຂອງເປໂຕຕໍ່ຊາວອິດສະຣາເອນເທົ່ານັ້ນ

ປະຊາຊົນຊາວຢິວຮູ້ວ່າ ການເວົ້າພາສາຂອງຄົນຕ່າງຊາດແມ່ນສັນຍາລັກຂອງການພິພາກສາຈາກພຣະເຈົ້າຕໍ່ພວກເຂົາ. ເມື່ອໂປໂລຂຽນເຖິງຊາວໂກລິນໂທ, ບໍ່ດົນຫຼັງຈາກນັ້ນ ອິດສະຣາເອນກໍໄດ້ສະດຸດລົ້ມ (ໂຣມ 11:11-12,15). ພຣະເຈົ້າໄດ້ກ່າວກັບອິດສະຣາເອນດ້ວຍວິທີການຕ່າງໆ ເພື່ອບອກເຂົາວ່າ ພວກເຂົາຈະສະດຸດລົ້ມ. ວິທີຫນຶ່ງທີ່ພຣະເຈົ້າຊົງກ່າວກັບອິດສະຣາເອນ ຜູ້ທີ່ບໍ່ເຊື່ອໃນຕອນນັ້ນ ກໍຄືກ່າວຜ່ານທາງພາສາແປກໆ. ຜູ້ທີ່ເຊື່ອຊາວໂກຣິນໂທໄດ້ເຕົ້າໂຮມກັນຢູ່ໃນເຮືອນຫຼັງຫນຶ່ງທີ່ຢູ່ຂ້າງທຳມະສາລາ (ກິດຈະການ 18:7). ພາສາທີ່ເວົ້າຢູ່ໃນຄຣິສຕະຈັກໂກຣິນໂທແມ່ນໝາຍສຳຄັນເຖິງຊາວຢິວທີ່ຢູ່ອ້ອມຂ້າງແຖວນັ້ນ. ປັດຈຸບັນ ພຣະເຈົ້າບໍ່ເວົ້າກັບຊົນຊາດອິດສະຣາເອນດ້ວຍ

ວິທີນີ້ອີກແລ້ວ. ເພາະສະນັ້ນ, ພຣະເຈົ້າຈຶ່ງບໍ່ໄດ້ຍົກໃຫ້ຂອງປະທານໃນການປາກພາສາແປກໆ ເປັນໝາຍສຳຄັນຕໍ່ຊາວຢິວ ຜູ້ທີ່ບໍ່ເຊື່ອອີກແລ້ວ.

## ປັດຈຸບັນນີ້, ພວກເຮົາຄວນເວົ້າພາສາແປກໆບໍ?

ບັດນີ້ ພວກເຮົາຈະເອົາໃຈໃສ່ກັບ 1 ໂກລິນໂທ 13:8-13. ພວກເຮົາຮູ້ວ່າ ຂອງປະທານເລື່ອງໝາຍສຳຄັນຕ່າງໆ ໄດ້ລະບຸໄວ້ໃນ 1 ໂກຣິນໂທ 12: 8-10 ແມ່ນຍັງມີຢູ່ໃນຕອນທີ່ໂປໂລໄດ້ຂຽນໄປເຖິງເມືອງໂກລິນໂທ. ແຕ່ໂປໂລໄດ້ເຮັດໃຫ້ມັນຊັດເຈນວ່າ ຂອງປະທານໃນການທຳນາຍ, ການປາກພາສາແປກໆ ແລະ ຄວາມຮູ້ຈະຜ່ານພົ້ນໄປ. "ເຖິງແມ່ນການປະກາດພຣະທຳກໍຈະຖືກຍົກເລີກ ຫລືການເວົ້າພາສາແປກໆກໍຈະເຊົາ ແລະວິຊາຄວາມຮູ້ກໍຈະຖືກຍົກເລີກເສຍ ແຕ່ຄວາມຮັກຍັງຈະຕັ້ງໝັ້ນຄົງຕະຫລອດໄປ" (1 ໂກລິນໂທ 13:8). ຄຳຖາມຄື: ເມື່ອໃດພາສາແປກໆຈະຜ່ານພົ້ນໄປ?

ທ້ອງເລື່ອງໃນ 1 ໂກຣິນໂທ 13:9-12 ເປັນຄວາມຮູ້ຢ່າງໜຶ່ງ. ("ເພາະຄວາມຮູ້ຂອງພວກເຮົານັ້ນບໍ່ສົມບູນ" - ຂໍ້ທີເກົ້າ; "ເຮົາເຄີຍປາກແລະມີໃຈຢ່າງເດັກນ້ອຍ" - ຂໍ້ທີສິບເອັດ; "ຕອນນີ້ຄວາມຮູ້ຂອງເຮົາບໍ່ສົມບູນ" - ຂໍ້ສິບສອງ). ເມື່ອໂປໂລຂຽນ 1 ໂກຣິນໂທ, ລາວຍັງບໍ່ໄດ້ຮັບການເປີດເຜີຍຢ່າງສົມບູນກ່ຽວກັບຄວາມເລິກລັບ. ລາວພຽງແຕ່ຮູ້ບາງສ່ວນ (ມີຄວາມຮູ້ບາງສ່ວນ). ແຕ່ລາວຮູ້ວ່າ "ຄວາມສົມບູນແບບ" ຈະມາເຖິງ. "ແຕ່ເມື່ອຄວາມສົມບູນມາເຖິງແລ້ວ ຄວາມບົກພ່ອງນັ້ນກໍຈະຖືກຍົກເລີກເສຍ" (1 ໂກລິນໂທ 13:10). ຫຼາຍຄົນບອກວ່າ, ຄຳວ່າ "ສົມບູນແບບ" ໃນຂໍ້ນີ້ຫມາຍການສະເດັດກັບມາຄັ້ງທີສອງຂອງພຣະຄຣິດ. ແຕ່ບໍ່ມີຫຍັງໃນທ້ອງເລື່ອງດັ່ງກ່າວທີ່ຈະເຮັດໃຫ້ພວກເຮົາສະຫຼຸບໄດ້ວ່າ ໂປໂລກຳລັງເວົ້າເຖິງການສະເດັດມາຄັ້ງທີສອງ. ທ້ອງເລື່ອງແມ່ນເວົ້າເຖິງຄວາມຮູ້.

ເມື່ອຄວາມຮູ້ "ທີ່ສົມບູນແບບ" (ເຕັມ, ຄົບຖ້ວນ, ໃຫຍ່ເຕັມສ່ວນ) ມາເຖິງ, "ຄວາມຮູ້ບາງສ່ວນ" (ຂອງປະທານເລື່ອງໝາຍສຳຄັນຕ່າງໆ) ກໍຈະໝົດໄປ (ຂໍ້ທີ 10). ຂໍ້ທີ 11 ເປັນພາບສະແດງຂອງການສອນເລື່ອງນີ້ ຄື "ເມື່ອເຮົາຍັງນ້ອຍຢູ່ນັ້ນ, ການເວົ້າຈາ ຄວາມຮູ້ສຶກ ແລະຄວາມນຶກຄິດຂອງເຮົາກໍເປັນຢ່າງເດັກນ້ອຍ. ແຕ່ເມື່ອເຮົາກາຍເປັນຜູ້ໃຫຍ່ແລ້ວ ເຮົາກໍເລີກຄວາມປະພຶດເປັນເດັກນ້ອຍນັ້ນໄປ" (1 ໂກລິນໂທ 13:11). "ເດັກນ້ອຍ" ແມ່ນຄຣິສຕະຈັກໃນໄວເດັກ. ເມື່ອຄຣິສຕະຈັກກາຍເປັນ "ຜູ້ໃຫຍ່," ສິ່ງຂອງທີ່ເປັນຂອງເດັກນ້ອຍ (ຂອງປະທານເລື່ອງໝາຍສຳຄັນຕ່າງໆ) ຈະຖືກຍົກເລີກໄປເສຍ. "ດຽວນີ້ ພວກເຮົາທັງຫລາຍເຫັນຜົນມົວໆ ເໝືອນເບິ່ງໃນແວ່ນ ແຕ່ເວລານັ້ນຈະເຫັນພຣະພັກຢ່າງຄັກ. ດຽວນີ້ຄວາມຮູ້ຂອງເຮົາບໍ່ສົມບູນ, ແຕ່ເວລານັ້ນ ເຮົາຈະຮູ້ຢ່າງສົມບູນເຫມືອນພຣະເຈົ້າຊົງຮູ້ຈັກເຮົາແລ້ວ" (1 ໂກລິນໂທ 13:12). ຂໍ້ທີ 12 ບໍ່ໄດ້ເວົ້າເຖິງການສະເດັດກັບມາຄັ້ງທີສອງຂອງພຣະຄຣິດຄືກັບຫຼາຍໆຂໍ້. ໂປໂລຍັງຢູ່ໃນຫົວຂໍ້ດຽວກັນ. ການເບິ່ງເຫັນ "ຜ່ານແວ່ນແບບມົວໆ" ແມ່ນອ້າງເຖິງຄຣິສຕະຈັກທີ່ຍັງເປັນເດັກນ້ອຍ ແລະ ມີຄວາມຮູ້ພຽງບາງສ່ວນ. "ເຫັນພຣະພັກຢ່າງຄັກ" ຄືກັບການເບິ່ງໃນແວ່ນທີ່ແຈ້ງໃສ ແລະ ເປັນສັນຍາລັກເຖິງການເຫັນຄວາມເລິກລັບຢ່າງຊັດເຈນ ແລະຄົບຖ້ວນ.

ເມື່ອພວກເຮົາສຶກສາຢ່າງລະອຽດ, 1 ໂກລິນໂທ 13:8-13 ສອນພວກເຮົາຢ່າງຊັດເຈນວ່າ ຂອງປະທານໃນການທຳນວາຍ, ການປາກພາສາແປກໆ ແລະຄວາມຮູ້ໄດ້ຢຸດເຊົາເມື່ອໂປໂລໄດ້ຮັບຄວາມຮູ້ເລື່ອງຄວາມເລິກລັບຢ່າງເຕັມ

ສ່ວນ. ເວລາທີ່ຈົດຫມາຍຝາກຂອງໂປໂລໄດ້ສຳເລັດລົງ, ຂອງປະທານເຫຼົ່ານີ້ຈະບໍ່ມີອີກຕໍ່ໄປ. ເຖິງແມ່ນວ່າຈະມີເລື່ອງເລົ່າ ແລະຄຳພະຍານຫລາຍຢ່າງ, ແຕ່ກໍບໍ່ມີໃຜໃນທຸກມື້ນີ້ທີ່ມີຂອງປະທານຝ່າຍວິນຍານແທ້ງ.

<u>ຄຳຖາມທວນຄືນ ບົດຮຽນ 30 - ຂອງປະທານຝ່າຍວິນຍານ</u>

<u>ຖືກ ຫຼື ຜິດ</u>

1. ໃນເວລາທີ່ຜ່ານມາ, ພຣະເຈົ້າຊົງໃຊ້ຂອງປະທານຝ່າຍວິນຍານ ເພື່ອນຳມາເຊິ່ງຄວາມສາມັກຄີ ແລະ ຄວາມສະຫງົບສຸກໃນທ່າມກາງຄຣິສຕຽນ.
2. ໂມເຊໄດ້ສະແດງໝາຍສຳຄັນອັນທຳອິດທີ່ມະນຸດເຮັດໃນພຣະຄຳພີ ທ່າມກາງຊາດອິດສະຣາເອນ, .
3. ພຣະຄຳພີສອນວ່າ ພາສາແປກໆເປັນພາສາທີ່ເຮັດໃຫ້ເກີດຄວາມສະຫງົບສຸກທາງຈິດໃຈ ຫຼື ເປັນພາສາຂອງທູດສະຫວັນ.
4. ພຣະເຈົ້າຊົງມອບຂອງປະທານຝ່າຍວິນຍານ ເພື່ອໃຫ້ຄວາມບັນເທີງ ແລະເພື່ອປະໂຫຍດສ່ວນຕົວຂອງຜູ້ທີ່ໄດ້ຮັບຂອງປະທານນັ້ນ.

<u>ຄຳຖາມແບບປາລະໄນ</u>

5. ໂປໂລອ້າງອີງເຖິງເອຊາຢາ 28:11-12:

ກ. ເພື່ອພິສູດວ່າ ພວກເຮົາຕ້ອງຮັກສາກົດບັນຍັດ.

ຂ. ເພື່ອສະແດງໃຫ້ເຫັນຈຸດປະສົງຂອງ ຂອງປະທານໃນການປາກພາສາແປກໆ.

ຄ. ເພື່ອພິສູດວ່າ ພຣະເຈົ້າໄດ້ໃຊ້ຂອງປະທານໃນການປາກພາສາແປກໆ ເວົ້າກັບຄົນຕ່າງຊາດ.

ງ. ສະແດງໃຫ້ເຫັນວ່າ ການບັບຕິສະມາດ້ວຍນ້ຳເປັນສັນຍາລັກເຖິງຄວາມເຊື່ອຂອງພວກເຮົາ.

6. ເມື່ອເຢເຣມີຢາ 5:15 ກ່າວເຖິງ "ຊາດໜຶ່ງທີ່ເຈົ້າບໍ່ຮູ້ພາສານັ້ນ." ໝາຍເຖິງ:

ກ. ພຣະພອນທີ່ຊາດອື່ນຈະນຳມາໃຫ້ອິດສະຣາເອນ.

ຂ. ປະເທດຂອງທູດສະຫວັນ.

ຄ. ຄວາມສຳຄັນຂອງການຮຽນຮູ້ພາສາຕ່າງຊາດ ເພື່ອໃຊ້ໃນວຽກງານປະກາດ.

ງ. ພາສາແປກໆທີ່ເວົ້າກັບຊາວອິດສະຣາເອນ ກໍເພື່ອສະແດງການພິພາກສາຂອງພຣະເຈົ້າທີ່ມີຕໍ່ພວກເຂົາ.

7. ເມື່ອໂປໂລຂຽນພຣະທຳ 1 ໂກລິນໂທ:

ກ. ຂອງປະທານເລື່ອງໝາຍສຳຄັນຕ່າງໆຍັງມີຢູ່.

ຂ. ຂອງປະທານເລື່ອງໝາຍສຳຄັນຕ່າງໆໄດ້ຢຸດເຊົາໄປແລ້ວ.

ຄ. ບໍ່ມີໃຜເວົ້າພາສາແປກໆ.

ງ. ພຣະອົງຊົງສອນຜູ້ທີ່ເຊື່ອວິທີເວົ້າພາສາແປກໆ.

ຕື່ມໃສ່ຊ່ອງຫວ່າງ

8. ໃນ 1 ໂກລິນໂທ 13 ໂປໂລໄດ້ສອນວ່າ ເມື່ອ__________ ມາເຖິງແລ້ວ, "ຄວາມບົກພ່ອງນັ້ນ" (ຂອງປະທານເລື່ອງໝາຍສຳຄັນຕ່າງໆ) ກໍຈະຫາຍໄປ.

9. 1 ໂກລິນໂທ 13:8-13 ສອນພວກເຮົາວ່າ ຂອງປະທານໃນການທຳນວາຍ, ການປາກພາສາແປກໆ ແລະຄວາມຮູ້ໄດ້ຢຸດຕິລົງ ເມື່ອໂປໂລໄດ້ຮັບຄວາມຮູ້ເລື່ອງຄວາມເລິກລັບຢ່າງເຕັມສ່ວນແລ້ວ.

10. ມີພຣະທຳຕອນດຽວເທົ່ານັ້ນໃນມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ ທີ່ເບິ່ງຄືວ່າ ເວົ້າເຖິງຂອງປະທານຝ່າຍວິນຍານ ຄື ______________.